ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110



# ຄະນະຜູ້ແທນຈາກ ສປປ ລາວ ເຂົ້າຮ່ວມກອງປະຊຸມປະຈຳປີ ຂອງກຸ່ມອາຊີປາຊີຟິກ ເພື່ອຕ້ານການຟອກເງິນ (Asia/Pacific Group on Money Laundering “APG”) ຢູ່ທີ່ເມືອງ Vancouver ປະເທດ Canada




ໃນລະຫວ່າງວັນທີ 9-14 ກໍລະກົດ 2023 ທີ່ຜ່ານມາ ຄະນະຜູ້ແທນຈາກ ສປປ ລາວ ນຳໂດຍ ທ່ານ ນາງ ວັດທະນາ ດາລາລອຍ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ທັງເປັນ ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ພ້ອມດ້ວຍ ຄະນະຜູ້ແທນຈາກພາກສ່ວນກ່ຽວຂ້ອງຈຳນວນໜຶ່ງ ໄດ້ເຂົ້າຮ່ວມກອງປະຊຸມປະຈຳປີ ຂອງກຸ່ມອາຊີປາຊີຟິກ ເພື່ອຕ້ານການຟອກເງິນ (Asia/Pacific Group on Money Laundering “APG”) ຢູ່ທີ່ເມືອງ Vancouver ປະເທດ Canada ໂດຍມີຜູ້ເຂົ້າຮ່ວມຫຼາຍກວ່າ 200 ກວ່າທ່ານ ທີ່ມາຈາກບັນດາປະເທດສະມາຊິກ ແລະ ອົງການຈັດຕັ້ງສາກົນ







ໜຶ່ງໃນວາລະຂອງກອງປະຊຸມດັ່ງກ່າວ ແມ່ນໄດ້ມີການພິຈາລະນາຮັບຮອງເອົາຮ່າງບົດລາຍງານການປະເມີນຜົນຮອບດ້ານກ່ຽວກັບວຽກງານຕ້ານສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ວຽກງານ AML/CFT) ຂອງ ສປປ ລາວ, ຊຶ່ງຄະນະຜູ້ແທນຂອງ ສປປ ລາວ ກໍໄດ້ມີ ການອະທິບາຍ ແລະ ຊີ້ແຈງບາງບັນຫາທີ່ສຳຄັນ ຕໍ່ກອງປະຊຸມ ເພື່ອຊາບ ແລະ ພິຈາລະນາ ພ້ອມນີ້ ກໍ່ໄດ້ຂໍການສະໜັບສະໜູນຈາກບັນດາ

ປະເທດສະມາຊິກຂອງກຸ່ມ APG ແລະ ອົງການຈັດຕັ້ງສາກົນເພື່ອຊ່ວຍ ສປປ ລາວ ໃນການແກ້ໄຂບັນດາຂໍ້ຄົງຄ້າງທີ່ຕິດພັນກັບການປະເມີນຜົນ. ຢ່າງໃດກໍ່ດີ, ພາຍຫຼັງບົດລາຍງານການປະເມີນຜົນໄດ້ຖືກຮັບຮອງ ສປປ ລາວ ແມ່ນຈະມີການສືບຕໍ່ສ້າງ ແລະ ຈັດຕັ້ງປະຕິບັດແຜນດຳເນີນງານກ່ຽວກັບວຽກງານ AML/CFT ໃຫ້ສຳເລັດ ແລະ ມີຄວາມຄືບໜ້າ ເປັນແຕ່ລະໄລຍະ.

**ຂ່າວ ແລະ ພາບໂດຍ: ສຳນັກງານຕ້ານການຟອກເງິນ**

*ຄົນລາວຮັກເມືອງລາວໃຊ້ເງິນກີບລາວ*